NSW GOVERNMENT

**Suspension factsheet: supporting your child's wellbeing**

**Parent/carer information**

# ເຈັ້ຍຂໍ້ມູນ ກ່ຽວກັບການສັ່ງພັກຮຽນ: ການສະໜັບສະໜຸນຄວາມເປັນຢູ່ທີ່ດີຂອງລູກທ່ານ

## ເຈັ້ຍຂໍ້ມູນສໍາລັບພໍ່ແມ່/ຜູ້ດູແລ

### ຈະສະໜັບສະໜຸນອູ້ມຊູລູກຂອງທ່ານຢ່າງໃດ

ບ່ອນທີ່ດີທີ່ຈະເລີ້ມຕົ້ນໃນເວລາທີ່ສະໜັບສະໜຸນ ສຸຂະພາບແລະຄວາມເປັນຢູ່ທີ່ດີຂອງລູກຂອງທ່ານໃນລະຫວ່າງການ ຖືກສັ່ງພັກຮຽນ ແມ່ນການລວບລວມຂໍ້ມູນຜູ້ຊ່ຽວຊານແລະຄໍາແນະນໍາ. ສໍາລັບຄໍາແນະນໍາພາກປະຕິບັດແລະຂໍ້ມູນເພື່ອສະໜັບສະໜູນຄວາມເປັນຢູ່ທີ່ດີຂອງລູກຂອງທ່ານ ຈົ່ງເບິ່ງແຫຼ່ງຂໍ້ມູນທີ່ຢູ່ໜ້າຕໍ່ໄປນີ້:

- ຄວາມເປັນຢູ່ທີ່ດີ (Wellbeing)

ການສື່ສານໃນທາງບວກແລະເປີດກວ້າງລະຫວ່າງເຮືອນແລະໂຮງຮຽນຊ່ວຍໃຫ້ນັກຮຽນມີໂອກາດທີ່ດີທີ່ສຸດທີ່ຈະປະສົບຜົນສໍາເລັດ.

- ສ້າງຄວາມໝັ້ນໃຈໃຫ້ລູກຂອງທ່ານວ່າພວກເຂົາເປັນສະມາຊິກທີ່ມີຄຸນຄ່າຂອງຊຸມຊົນໂຮງຮຽນ.
- ແຈ້ງຄວາມກັງວົນໃດໆກັບໂຮງຮຽນ.
- ເຮັດວຽກຮ່ວມກັບທີມງານໂຮງຮຽນເພື່ອພັດທະນາ ແລະ ໃຊ້ຍຸດທະສາດທີ່ສະໜັບສະໜູນການມີສ່ວນຮ່ວມຂອງລູກໃນການຮຽນຮູ້.
- ເຂົ້າຮ່ວມກອງປະຊຸມວາງແຜນການກັບຄືນໄປຮຽນຂອງລູກຂອງທ່ານ. ອັນນີ້ອາດຈະເປັນທາງໜ້າຕໍ່ໜ້າ, ທາງອອນລາຍ ຫຼືທາງໂທລະສັບ ໃຊ້ຮູບແບບທີ່ຈະໃຫ້ໂອກາດທີ່ດີທີ່ສຸດຂອງການສົນທະນາໃນທາງບວກ.
- ເວົ້າລົມກັບລູກຂອງທ່ານກ່ຽວກັບຄວາມປະພຶດທີ່ ເໝາະສົມທີ່ສ້າງສະພາບແວດລ້ອມການຮຽນຮູ້ໃນທາງບວກ, ປອດໄພ, ແບບລວມແລະໃຫ້ຄວາມເຄົາລົບ.
- ຊຸກຍູ້ໃຫ້ລູກຂອງທ່ານແບ່ງປັນຄວາມຄິດ ແລະຄວາມຄິດເຫັນຂອງພວກເຂົາຢ່າງຈິງຈັງແລະດ້ວຍຄວາມເຄົາລົບ.

### ການຮຽນຮູ້ຈາກເຮືອນໃນຂະນະທີ່ຢູ່ໃນການສັ່ງພັກຮຽນ

- ສະມາຊິກຂອງພະນັກງານຈະຕິດຕໍ່ກັບທ່ານ ແລະ ລູກຂອງທ່ານເປັນປະຈໍາໃນລະຫວ່າງໄລຍະເວລາຂອງການພັກຮຽນ.
- ຊ່ວຍໃຫ້ລູກຂອງທ່ານຮຽນຮູ້ໂດຍການກໍານົດເວລາທີ່ຊັດເຈນສໍາລັບໄລຍະເວລາການເຮັດວຽກໃນລະຫວ່າງມື້, ຊອກຫາບ່ອນງຽບໆ, ແລະຖາມວ່າການຮຽນຮູ້ຂອງພວກເຂົາມີຄວາມຄືບໜ້າແນວໃດ.
- ໃຫ້ແນ່ໃຈວ່າພວກເຂົາໄດ້ພັກຜ່ອນ, ດື່ມນໍ້າ ແລະສະໜັບສະໜຸນພວກເຂົາຖ້າພວກເຂົາມີຄວາມເຄັ່ງຄຽດ ຫຼື ເປັນກັງວົນ.
- ໃຫ້ເວລາສໍາລັບກິດຈະກໍາທາງດ້ານຮ່າງກາຍ.
- ກໍາກັບດູແລລູກຂອງທ່ານໃຫ້ໃຊ້ເຕັກໂນໂລຢີຢ່າງປອດໄພ. ເວັບໄຊທ໌ເລື່ອງການນໍາໃຊ້ເຕັກໂນໂລຢີ (Using technology) ມີຂໍ້ມູນແລະຊັບພະຍາກອນຕ່າງໆທີ່ທ່ານອາດຈະເຫັນວ່າເປັນປະໂຫຍດ.

### ລິ້ງຕ່າງໆທີ່ເປັນປະໂຫຍດ

- ຊຸດການຮຽນຮູ້ (Learning packages)
- ຄໍາແນະນໍາການຮຽນຮູ້ ແລະການສະໜັບສະໜູນຄົນພິການ (Disability learning and support advice)
- ຊຸດເຄື່ອງມືຊ່ວຍເຫຼືອດ້ານຄວາມປະພຶດ: ການຊ່ວຍເຫຼືອສໍາລັບພໍ່ແມ່ (Behaviour support toolkit: support for parents)
- ຊ່ວຍໃຫ້ລູກຂອງທ່ານຮຽນຮູ້ຈາກເຮືອນ (Helping your child learn from home)
- ສາຍ ຊ່ວຍເດັກ (Kids Helpline) ເປັນບໍລິການໃຫ້ຄໍາປຶກສາທາງໂທລະສັບຟຣີອັນດຽວຂອງອອສເຕຣເລັຍສໍາລັບຄົນໄວໜຸ່ມອາຍຸ 5 ຫາ 25 ປີ. ໂທຫາ ເບີ 1800 55 1800.

### ບໍລິການນາຍພາສາທາງໂທລະສັບ

ຖ້າທ່ານຕ້ອງການຕິດຕໍ່ກັບໂຮງຮຽນ ແລະຕ້ອງການຄວາມຊ່ວຍເຫຼືອດ້ານພາສາອັງກິດ ກະລຸນາໂທຫາບໍລິການນາຍພາສາທາງໂທລະສັບ ເບີ 131 450, ບອກພວກເຂົາວ່າທ່ານຕ້ອງການພາສາໃດ ແລະຂໍໃຫ້ຜູ້ຮັບສາຍໂທຫາໂຮງຮຽນ. ຜູ້ໂຮງຮຽນ. ຜູ້ຮັບສາຍຈະຊອກຫານາຍພາສາຢູ່ໃນສາຍເພື່ອຊ່ວຍທ່ານໃນການສົນທະນາຂອງທ່ານ. ທ່ານຈະບໍ່ຖືກເກັບຄ່າ ທ່ານ. ທ່ານຈະບໍ່ຖືກເກັບຄ່າບໍລິການນີ້.